ຄວາມເປັນມາຂອງ

# ຊົນຊາດລາວ



ສະພາບການໃນປະເທດອ້ອມຂ້າງ, ໃນອານາຈັກລາວລ້ານຊ້າງ
ຕອນຕົ້ນ ແລະ ວິວັດທະນາການດ້ານອະຣິຍະທຳຂອງຊົນຊາດລາວ

ໂດຍ: ມະຫາບຸນມີ ເທບສີເມືອງ

ເຫຼັ້ມ II

ມອບໃຫ້

ທ່ານນາງ ດວງເດືອນ ບຸນຍາວົງ

ເພື່ອໃຊ້ສຶກສາຄົ້ນຄວ້າ

ບຸນມີ ເທບສີເມືອງ

26/3/2010

# ຄວາມເປັນມາຂອງຊົນຊາດລາວ

## ເຫລັ້ມ II

## ສະພາບການໃນປະເທດອ້ອມຂ້າງ, ໃນອານາຈັກ ລາວລ້ານຊ້າງຕອນຕົ້ນ ແລະວິວັດທະນາການ ດ້ານອະຣິຍະທຳ ຂອງຊົນຊາດລາວ

ໂດຍ

ມະຫາບຸນມີ ເທບສີເມືອງ

ພິມເທື່ອທີ ໜຶ່ງ : ຈຳນວນ 3000 ສະບັບ

ສະຫງວນລິຂະສິດ

2009

# ຄວາມເປັນມາຂອງຊົນຊາດລາວ ເຫລັ້ມ II

ຂະໜາດປຶ້ມ : 14.8 x 21 ຊຕມ

ຜູ້ແຕ່ງແລະພິມຕົ້ນສະບັບ : ມະຫາບຸນມີ ເທບສີເມືອງ

ພາບພິກໂດຍ : ເພັດຊົມພູ ຕະກຸນສັກ

ພິສູດອັກສອນ : ສົມບາງ ເທບສີເມືອງ

ພິມເປັນປຶ້ມ: ໂຮງພິມສີສະຫວາດ, ນະຄອນຫລວງວຽງຈັນ.

ເລກທະບຽນການພິມຈຳໜ່າຍ: 448 ພຈ 29122009

ພິມເທື່ອທີ 1: ຄ.ສ. 2009 ຈຳນວນ 3000 ສະບັບ

ສະຫງວນລິຂະສິດ

**ໂດຍ: ມະຫາບຸນມີ ເທບສີເມືອງ**

# ໃບຢັ້ງຢືນ ລາງວັນປຶ້ມດີເດັ່ນ



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

************

ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ

ກົມພິມຈຳໜ່າຍ

ເລກທີ 102 / ພຈ

## ໃບຢັ້ງຢືນ

ກົມພິມຈຳໜ່າຍ, ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

ຢັ້ງຢືນວ່າ: ທ່ານ ບຸນມີ ເທບສີເມືອງ ຢູ່ບ້ານ ໜອງສ້າງທໍ່ ເມືອງ ໄຊເສດຖາ ນະຄອນຫລວງວຽງຈັນ ໄດ້ຂຽນ ແລະ ຈັດພິມ ເປັນຜູ້ຈັດພິມປຶ້ມທີ່ມີຊື່ວ່າ: "ຄວາມເປັນມາຂອງຊົນຊາດລາວ", ເຫຼັ້ມທີ I ພິມຄັ້ງທີ I ພິມທີ່ໂຮງພິມ ສຶກສາ ຕາມເລກທະບຽນພິມ 075 ພຈ 28042006 ຈຳນວນພິມ: 5.000 ເຫລັ້ມ ໄດ້ຮັບລາງວັນດີເດັ່ນປະຈຳປີ 2007 ໃນໂຄງການຄັດເລືອກປຶ້ມດີເດັ່ນປະຈຳສົກປີ 2006 - 2007

ດັ່ງນັ້ນ, ຈຶ່ງໄດ້ອອກໃບຢັ້ງຢືນສະບັບນີ້ ເພື່ອຈາລຶກຜົນງານຂອງທ່ານໄວ້ເປັນຫລັກຖານ

ວຽງຈັນ, ວັນທີ 8 ພຶດສະພາ 2008

ຫົວໜ້າກົມພິມຈຳໜ່າຍ

ສີວຸແສງ ກອນນີວົງ

ຂໍ້ມູນທາງບັນນານຸກົມຂອງຫໍສະໝຸດແຫ່ງຊາດ

ບຸນມີ ເທບສີເມືອງ

ຄວາມເປັນມາຂອງຊົນຊາດລາວ ເຫຼັ້ມ II : ສະພາບການ ໃນ ປະເທດອ້ອມຂ້າງ, ໃນອານາຈັກລາວລ້ານຊ້າງຕອນຕົ້ນ ແລະ ວິວັດທະນາການດ້ານອະຣິຍະທຳຂອງຊົນຊາດລາວ / ບຸນມີ ເທບສີເມືອງ. ວຽງຈັນ : (ໂຮງພິມສີສະຫວາດ), 2010.

375 ໜ້າ : ພາບປະກອບສີ ; 21 ຊມ.

ປະກອບດ້ວຍ ບັນນານຸກົມ.

1. ລາວ -- ປະຫວັດສາດ. I. ຊື່ເລື່ອງ.

959.4 dc—21

ISBN 978-9932-06-056-6

# ອາລຳພະບົດ

ປຶ້ມຄວາມເປັນມາ ຂອງຊົນຊາດລາວເຫລັ້ມນີ້ ເກີດຂຶ້ນມາໄດ້ດ້ວຍແຮງຈູງໃຈ ໃຝ່ສະແຫວງຫາສັດຈະທຳ ເພື່ອຄວາມກະຈ່າງແຈ້ງກ່ຽວກັບປະຫວັດສາດ ຂອງຊົນຊາດລາວ ຊຶ່ງເປັນຊາດເກົ່າແກ່ບູຮານມີມາແລ້ວ ແຕ່ສະໄໝປະຖົມບູຮານ ເປັນເວລາຍາວນານຫລາຍພັນປີ. ຊົນຊາດລາວ ເຄີຍສ້າງຕັ້ງນະຄອນຣັດ, ເຄີຍມີອະຣິຍະທຳທີ່ຈະເລີນຮຸ່ງເຮືອງມາ ໃນອະດີດຕະການຫລາຍພັນປີ ຊຶ່ງຊາວໂລກຮູ້ຈັກ ໃນນາມອານາຈັກອ້າຍລາວ ແລະ ອານາຈັກລາວລ້ານຊ້າງ, ແຕ່ອານາຈັກດັ່ງກ່າວໄດ້ສູນເສຽເອກະລາດ ແລະລົ້ມສະລາຍໄປ ຍັງເຫລືອດິນແດນຜືນນ້ອຍໆໄວ້ ໃຫ້ປາກົດຊື່ໃນປັດຈຸບັນນີ້ວ່າ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ. ຊາວໂລກໃນຍຸກປັດຈຸບັນ ຍັງມີຄວາມຮູ້ຄວາມເຂົ້າໃຈກ່ຽວກັບ ປະຫວັດສາດຂອງຊົນຊາດລາວ ຄາດເຄື່ອນແລະສັບສົນເພາະວ່າ ຂໍ້ມູນກ່ຽວກັບປະຫວັດສາດ ຂອງຊົນຊາດລາວໃນປາງອະດີໄດ້ຂາດຫາຍ ຫລື ສູນຫາຍໄປ, ຍັງບໍ່ທັນໄດ້ມີການສຶກສາຄົ້ນຄວ້າ ເຜີຍແຜ່ຂໍ້ມູນທີ່ຖືກຕ້ອງພຽງພໍ. ຈາກຫລັກຖານຂໍ້ມູນ ທີ່ມີການຄົ້ນພົບໃໝ່ ໃນທ້າຍຄຣິດສະຕະວັດທີ 20 ຜ່ານມາ ແລະ ໃນຕົ້ນຄຣິດສະຕະວັດທີ 21ນີ້ເຮັດໃຫ້ຫລິງເຫັນໄດ້ ຮ່ອງຮອຍປະຫວັດສາດ ຂອງຊົນຊາດລາວ ໃນປາງອະດີດອັນຍາວນານນັບໝື່ນປີ ເຊັ່ນ: ຂວານຫີນຕອກ, ຂວານຫີນຝົນ, ແລະຂວານທອງເຫລືອງ ທີ່ເມືອງວັງວຽງ ແຂວງວຽງຈັນ, ຮູບ ແຕ້ມຕາມໜ້າຜາ ແລະ ຝາຜະໜັງຖ້ຳຕ່າງໆ, ເສົາຫີນຕັ້ງ ທີ່ແຂວງຫົວພັນ, ໄຫຫີນທີ່ທົ່ງໄຫຫີນ ແຂວງຊຽງຂວາງ, ເຄື່ອງປັ້ນດິນເຜົາ ທີ່ເຫລົ່າປ່າໂກ ໃກ້ນະຄອນຫລວງວຽງຈັນ, ແລະ ທີ່ ບ້ານຊຽງ, ບ້ານນາດີ ຊຶ່ງຢູ່ທາງຝັ່ງຂວາແມ່ນ້ຳຂອງ. ສິລາຈາລຶກອັກສອນລາວ ອາຍຸ 832 ປີ ທີ່ວັດວິຊຸນ

ແຂວງຫລວງພຣະບາງ, ເສົາຫີນຕັ້ງທີ່ພຣະທາດຫລວງ ນະຄອນຫລວງວຽງຈັນກໍແມ່ນຫລັກຖານສໍາຄັນອີກສ່ວນໜຶ່ງ ທີ່ຈະຕ້ອງໄດ້ທົບທວນຄືນເຫດການທາງປະຫວັດສາດ ຫລື ຄວາມເປັນມາຂອງຊົນຊາດລາວ. ບັນດາຫລັກຖານ ທາງດ້ານວັດຖຸ ທີ່ໄດ້ຄົ້ນພົບໃໝ່ນີ້, ໄດ້ສ່ອງແສງໃຫ້ເຫັນວິວັດທະນາການ ຂອງຄົນລາວບູຮານ ແຕ່ພັນປີຄືນໄປເຖິງໝື່ນປີໃນປາງອະດີດ ທີ່ມີວິວັດທະນາການມາຢ່າງຕໍ່ເນື່ອງ. ບັນດາຫລັກຖານທີ່ຄົ້ນພົບໃໝ່ເຫລົ່ານີ້ ເຫັນວ່າບາງທິດສະດີ ປະຫວັດສາດ ທີ່ເຄີຍເຊື່ອກັນມາໃນເມື່ອກ່ອນ ບໍ່ສອດຄ່ອງກັບຄວາມເປັນຈິງ ທີ່ຄົ້ນພົບໃໝ່ໃນປັດຈຸບັນ, ຈໍາເປັນຕ້ອງໄດ້ທົບທວນຄືນໃໝ່.

ເພື່ອຄວາມກະຈ່າງແຈ້ງ ກ່ຽວກັບຄວາມເປັນມາຂອງຊົນຊາດລາວ ແລະ ໃຫ້ຂໍ້ມູນທີ່ຖືກຕ້ອງແກ່ສັງຄົມລາວ ແລະ ຊາວໂລກ, ຜູ້ຂຽນຈຶ່ງໄດ້ພຽນພະຍາຍາມສຶກສາຄົ້ນຄວ້າ ຂຽນຮຽບຮຽງຄືນໃໝ່ກ່ຽວກັບປະຫວັດສາດ ຫລື ຄວາມເປັນມາ ຂອງຊົນຊາດລາວ ຊຶ່ງມີຄວາມຕິດພັນກັນຢ່າງສະໜິດແໜ້ນ ລະຫວ່າງ ສ ປ ປ ລາວ ໃນປັດຈຸບັນ ກັບອານາຈັກອ້າຍລາວ ແລະ ອານາຈັກລາວລ້ານຊ້າງ,ອານາຈັກລາວໂຄດຕະບູນ,ອານາຈັກທະວາຣາວະດີ, ອານາຈັກໂຍນົກໃນປາງອະດີດ. ຜ່ານການສຶກສາຄົ້ນຄວ້າມາຫລາຍປີ, ຜູ້ຂຽນຈຶ່ງສາມາດສະລຸບສັງລວມ ເນື້ອໃນກ່ຽວກັບປະຫວັດສາດ, ຄວາມເປັນມາ ຂອງຊົນຊາດລາວໄດ້ ແລະ ໄດ້ວາງໂຄງຮ່າງ ການຂຽນປຶ້ມດັ່ງກ່າວນີ້ ໂດຍໄດ້ແບ່ງອອກເປັນ 2 ເຫລັ້ມ ເພື່ອບໍ່ໃຫ້ເປັນເຫລັ້ມໜາເກີນໄປ ແລະ ໃຫ້ສອດຄ່ອງກັບ ສະພາບເສດຖະກິດໃນປັດຈຸບັນ, ໄດ້ໃຫ້ຊື່ປຶ້ມວ່າ "ຄວາມເປັນມາຂອງຊົນຊາດລາວ" ຊຶ່ງເລີ້ມມາແຕ່ສະໄໝປະຖົມບູຮານເປັນຕົ້ນມາ. ເພື່ອໃຫ້ທ່ານຜູ້ອ່ານ ມີຄວາມເຂົ້າໃຈແຈ້ງ ກ່ຽວກັບປະຫວັດຄວາມເປັນມາ ຂອງມະນຸດຊາດໃນໂລກກຸ່ມໂຮໂມຊາປຽນ (Homo Sapiens) ແລະ ບັນພະບຸຣຸດຂອງຊົນ

ຊາດລາວ ກໍແມ່ນໜໍ່ແໜງ ຂອງມະນຸດຊາດກຸ່ມດັ່ງກ່າວ. ບັນພະບຸຣຸດຂອງຊົນຊາດລາວ ເຄີຍມີຖິ່ນຖານຢູ່ຖ້ຳ ທີ່ພູເລີຍມາກ່ອນ ແລ້ວ ໄດ້ແຜ່ກະຈາຍໄປສູ່ດິນແດນຕ່າງໆ ທັງໃນເຂດອ່າງແມ່ນ້ຳຂອງຕອນເໜືອ ແລະ ອ່າງແມ່ນ້ຳຂອງຕອນໃຕ້. ປຶ້ມຄວາມເປັນມາ ຂອງ ຊົນຊາດລາວຊຸດນີ້ ຈະໃຫ້ຄວາມກະຈ່າງແຈ້ງ ແກ່ທ່ານຜູ້ອ່ານ ບໍ່ຫລາຍກໍໜ້ອຍ. ປຶ້ມຊຸດນີ້ໄດ້ຈັດແບ່ງອອກເປັນ 2 ເຫລັ້ມ ດັ່ງນີ້:

## ຄວາມເປັນມາ ຂອງ ຊົນຊາດລາວ

ເຫລັ້ມ I: ການຕັ້ງຖິ່ນຖານແລະ ການສ້າງຕັ້ງປະເທດ

ເຫລັ້ມ II: ສັງລວມສະພາບການໃນອານາຈັກລາວລ້ານຊ້າງ

ປຶ້ມທັງ 2 ເຫລັ້ມນີ້ ຜູ້ຂຽນໄດ້ຊອກ ສຶກສາຄົ້ນຄວ້າ ເກັບກຳ ສັງລວມຂໍ້ມູນ ມາຈາກຫລາຍແຫລ່ງ, ໄດ້ຂຽນຮຽບຮຽງຂຶ້ນມາ ຈົນເປັນຮູບເຫລັ້ມ ແລ້ວສົ່ງໃຫ້ທ່ານຜູ້ຮູ້ຫລາຍທ່ານ ຊ່ວຍອ່ານ ຊ່ວຍປະກອບຄວາມເຫັນ, ແລ້ວໄດ້ເອົາມາປັບປຸງຄືນໃໝ່ໃຫ້ດີຍິ່ງຂຶ້ນ, ແຕ່ກໍອາດຍັງມີບາງບ່ອນ ທີ່ຍັງບໍ່ທັນສອດຄ່ອງເໝາະສົມ. ຫວັງວ່າຈະໄດ້ຮັບຄວາມອະໄພຈາກທ່ານຜູ້ຮູ້ ແລະ ທ່ານຜູ້ອ່ານທັງຫລາຍ, ຫວັງວ່າບັນດາທ່ານຈະຊ່ວຍສົ່ງຂ່າວແກ່ຜູ້ຂຽນ ເພື່ອປັບປຸງໃຫ້ສົມບູນ ດີຍິ່ງຂຶ້ນ. ໃນເບື້ອງຕົ້ນນີ້ຈະໄດ້ຈັດພິມເຫລັ້ມ I ອອກມາກ່ອນ ເພື່ອຄຳນັບຮັບຕ້ອນ ວັນຊາດ ວັນທີ 2 ທັນວາ ຄ.ສ. 2005 ຊຶ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວມີອາຍຸຄົບຮອບ 30 ປີ, ຫລັງຈາກນັ້ນ ຈຶ່ງຈະຈັດພິມເຫລັ້ມ II ໃນ ຂັ້ນຕໍ່ໄປ.

ຜູ້ຂຽນຂໍສະແດງ ຄວາມຮູ້ບຸນຄຸນ ແລະ ຂໍຂອບອົກຂອບໃຈບັນດາທ່ານທີ່ໄດ້ປະກອບສ່ວນໃຫ້ຂໍ້ມູນຕ່າງໆໃນການສຶກສາຄົ້ນຄວ້າຂຽນ

ປຶ້ມຊຸດນີ້ຕະຫຼອດເຖິງບັນດາທ່ານ ທີ່ໄດ້ຊ່ວຍອ່ານຮ່າງເບື້ອງຕົ້ນ ແລະ ປະກອບຄຳຄິດເຫັນ, ລາຍລະອຽດກ່ຽວກັບ ລາຍຊື່ຂອງທ່ານເຫລົ່ານັ້ນ ໄດ້ກ່າວໄວ້ໃນ ພາກທີ IV ນັ້ນແລ້ວ.

ທ້າຍສຸດ ຜູ້ຂຽນໄດ້ແປສາລະບານ ແລະ ບົດສັງລວມເນື້ອໃນເປັນພາສາອັງກິດໄວ້ເພື່ອທ່ານທີ່ບໍ່ຖະໜັດພາສາລາວຈະໄດ້ໃຊ້ປະໂຫຍດຈາກບົດດັ່ງກ່າວ.

ຫວັງວ່າປຶ້ມເຫລັ້ມນີ້ຈະໃຫ້ປະໂຫຍດແກ່ທ່ານຜູ້ອ່ານຫລາຍສົມຄວນ ແລະ ຫວັງເປັນຢ່າງຍິ່ງວ່າ ຈະໄດ້ຮັບຄຳແນະນຳ ຈາກທ່ານຜູ້ອ່ານ ໃນໂອກາດຕໍ່ໄປ, ຈຶ່ງຂໍສະແດງຄວາມຂອບໃຈລ່ວງໜ້າ ມາໃນທີ່ນີ້ດ້ວຍ.

ທີ່ ນະຄອນຫລວງວຽງຈັນ, ວັນທີ 30 ພະຈິກ ຄ.ສ. 2005

ຜູ້ຂຽນ

ບຸນມີ ເທບສີເມືອງ

ທີ່ບ້ານໂພນສະອາດ, ໜ່ວຍ 02
ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ.
ໂທ : 21412937 ຫລື 020 551 4245
" ລິຂະສິດປຶ້ມເຫລັ້ມນີ້ ເປັນຂອງຜູ້ຂຽນ ."

## ຄຳຊີ້ແຈງ ກ່ຽວກັບ: ການຈັດພິມເຫລັ້ມ II, ເຫລັ້ມ III

ທ່ານຜູ້ອ່ານທີ່ນັບຖື ແລະ ຮັກແພງ, ປື້ມຄວາມເປັນມາຂອງຊົນຊາດລາວ ເຫລັ້ມ II ທີ່ໄດ້ກ່າວໄວ້ໃນອາລຳພະບົດນັ້ນ, ໃນເບື້ອງຕົ້ນຄາດວ່າ ປື້ມຊຸດນີ້ ຈະພິມອອກເປັນ ສອງເຫລັ້ມ ຄື ເຫລັ້ມ I ແລະ ເຫລັ້ມ II. ໂຄງຮ່າງທີ່ກຳໜົດ ໄວ້ເບື້ອງຕົ້ນແມ່ນ ເຫລັ້ມ I ກ່າວເຖິງຄວາມເປັນມາ ຂອງຊົນຊາດລາວ ແຕ່ປະຖົມບູຮານມາເຖິງ ສະໄໝພຣະເຈົ້າຟ້າງຸ່ມ ສ້າງຕັ້ງອານາຈັກລາວລ້ານຊ້າງ, ເຫລັ້ມ II ກ່າວເຖິງສະພາບການ ໃນອານາຈັກລາວລ້ານຊ້າງ ຕໍ່ຈາກພຣະເຈົ້າຟ້າງຸ່ມ ມາເຖິງການສ້າງຕັ້ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ສຳລັບ ເຫລັ້ມ I ໄດ້ຈັດພິມອອກແລ້ວ ແຕ່ປີ 2006. ຫລັງຈາກນັ້ນ ຜູ້ຂຽນກໍໄດ້ພະຍາຍາມສຶກສາ ຫາຂໍ້ມູນເພີ່ມຕື່ມ ເພື່ອປັບປຸງຮ່າງເຫລັ້ມ II ທີ່ໄດ້ກຽມໄວ້ແລ້ວນັ້ນ ໃຫ້ສົມບູນດີຍິ່ງຂຶ້ນ. ໃນພາກປະຕິບັດຕົວຈິງ, ຍິ່ງສຶກສາຄົ້ນຄວ້າໄປຫລາຍ ກໍຍິ່ງໄດ້ຮູ້ໄດ້ເຫັນຂໍ້ມູນເພີ່ມຕື່ມຂຶ້ນຫລາຍ ແລະ ເຫັນພາບລວມຂອງປະຫວັດສາດ ໄດ້ຊັດເຈນຂຶ້ນເລື້ອຍໆ ຊຶ່ງສະແດງວ່າ ເສັ້ນທາງທີ່ກ້າວເດີນມາ ຖືກຕ້ອງແລ້ວ. ຜູ້ຂຽນໄດ້ເດີນທາງໄປເຖິງ ມົນທົນເສສວນ ສປ ຈີນ ເພື່ອສຶກສາຫາຂໍ້ມູນ ທີ່ເປັນຫລັກຖານເກົ່າແກ່ ຂອງຊົນຊາດລາວ. ທີ່ມົນທົນເສສວນ ໃກ້ກັບນະຄອນຫລວງເສິງຕູ (ຊຽງຕູ້) ໄດ້ພົບເຫັນເສົາຫີນຕັ້ງ ຢູ່ທີ່ເຂດນໍ້ຣະດົກໂລກຕູ ຈຽງ ຢ້ຽນ ( Du Jiang Yan ). ເສົາຫີນຕັ້ງດັ່ງກ່າວ ເປັນຄ້າຍຄືກັບເສົາຫີນຕັ້ງ ທີ່ສາຍພູສັນກອງພັນ ແຂວງຫົວພັນ ຂອງລາວເຮົານີ້.

ຫລັກຖານດັ່ງກ່າວ ຊີ້ໃຫ້ເຫັນວ່າເມື່ອ 5000 ປີ ກ່ອນພຸ້ນບັນພະບຸຣຸດລາວ ໄດ້ເຄື່ອນຍ້າຍ ຈາກສາຍພູເລີຍ ໄປຕັ້ງຖິ່ນຖານຢູ່ ໃນເຂດ

ນັ້ນແລ້ວ. ຢູ່ໃນດິນແດນລາວ ຜູ້ຂຽນກໍໄດ້ເດີນທາງ ໄປສືບຄົ້ນຫາຂໍ້ມູນ ຈາກທຸກໆແຂວງ ໃນທີ່ສຸດກໍໄດ້ໄປເຫັນ ທາດເຈດີ ທີ່ບັນຈຸອັດຖິ ຂອງ ພຣະເຈົ້າໄຊຍະເຊດຖາທິຣາດ ຢູ່ທີ່ເມືອງໄຊເສດຖາ ແຂວງອັດຕະປື. ນອກຈາກນີ້ ກໍມີຫລັກຖານຂໍ້ມູນອື່ນໆ ອີກຫລວງຫລາຍ. ບົນພື້ນຖານຂໍ້ ມູນ ທີ່ເກັບກໍາໄດ້ນີ້ ໄດ້ມາຂຽນຮຽບຮຽງຄືນໃໝ່ ຈົນສຸດເຫລັ້ມ, ມີເນື້ອໃນ ຄົບຖ້ວນຊັດເຈນດີສົມຄວນ ແຕ່ຍາວຫລາຍ ມີປະມານ 800 ໜ້າ. ຫາກ ຈະຈັດພິມເປັນເຫລັ້ມດຽວ ກໍຈະໜາເກີນໄປບໍ່ສະດວກ ໃນການຊົມໃຊ້ ທັງການອ່ານ ແລະ ການພົກພາ. ຈາກນັ້ນກໍໄດ້ປຶກສາຫາລື ກັບຜູ້ຮ່ວມງານ ໃກ້ຊິດຫລາຍຄົນ ໄດ້ມີຄວາມເຫັນເປັນເອກະພາບກັນວ່າ ຄວນແບ່ງເປັນ ສອງເຫລັ້ມ ຄື ເຮັດເປັນເຫລັ້ມ II ແລະ ເຫລັ້ມ III.

ໂດຍອີງຕາມເຫດຜົນດັ່ງກ່າວມານີ້ ປຶ້ມຄວາມເປັນມາຂອງຊົນຊາດ ລາວ ຈຶ່ງມີ 3 ເຫລັ້ມດັ່ງນີ້:

ເຫລັ້ມ I ກ່າວເຖິງຄວາມເປັນມາ ຂອງຊົນຊາດລາວ ແຕ່ປະຖົມ ບູຮານ ມາເຖິງສະໄໝພຣະເຈົ້າຟ້າງຸ່ມ ສ້າງຕັ້ງອານາຈັກລາວລ້ານຊ້າງ.

ເຫລັ້ມ II ກ່າວເຖິງສະພາບການໃນປະເທດອ້ອມຂ້າງ,ໃນອານາ ຈັກລາວລ້ານຊ້າງຕອນຕົ້ນ ແລະວິວັດທະນາການ ດ້ານອະຣິຍະທໍາຂອງຊົນ ຊາດລາວ.

ເຫລັ້ມ III ກ່າວເຖິງສະພາບການໃນອານາຈັກລາວລ້ານຊ້າງຕອນ ປາຍແລະການຕໍ່ສູ້ຂອງປະຊາຊົນລາວເພື່ອຄວາມເປັນເອກະລາດແຫ່ງຊາດ.

ເນື້ອໃນຂອງແຕ່ລະເຫລັ້ມ ຈະໜາປະມານ 400ໜ້າ ພໍດີອ່ານບໍ່ໜາ ເກີນໄປ. ການຂຽນປະຫວັດສາດອານາຈັກລາວລ້ານຊ້າງແມ່ນການກ່າວເຖິງ

ເຫດການໃນປາງອະດີດ ພາຍໃຕ້ລະບອບສັກດີນາອາດຍາສິດ;ມີຄວາມຈຳເປັນຕ້ອງໄດ້ກ່າວເຖິງ ກະສັດແຕ່ລະອົງທີ່ຂຶ້ນປົກຄອງປະເທດ ວ່າມາຈາກໃສມາດ້ວຍວິທີໃດ ຈຸດພິເສດຂອງກະສັດແຕ່ລະອົງ ເປັນແນວໃດ, ບັນຍາກາດສະພາບແວດລ້ອມເປັນແນວໃດ. ເມື່ອກໍໄດ້ຂໍ້ມູນເຫລົ່ານີ້ແລ້ວກໍຈະມີຈິນຕະນາການທີ່ຖືກຕ້ອງ ມອງເຫັນພາບລວມຂອງເຫດການໄດ້ດີຍິ່ງຂຶ້ນ.

ຜູ້ຂຽນໄດ້ໃຊ້ຄຳສັບ ເອີ້ນຊື່ກະສັດແຕ່ລະອົງ ທີ່ຂຶ້ນປົກຄອງປະເທດດ້ວຍການຣາຊາພິເສກວ່າ "ພຣະເຈົ້າ..." ສຳລັບກະສັດທີ່ອາຍຸຍັງນ້ອຍບໍ່ທັນໄດ້ຣາຊາພິເສກ ໄດ້ໃຊ້ຄຳວ່າ "ເຈົ້າ..." ຫລື "ພຣະ..." ນຳໜ້າຊື່ກະສັດ.ກ່ຽວກັບພາສາທີ່ໃຊ້ໃນການຂຽນປຶ້ມນີ້ ໄດ້ໃຊ້ຄຳສັບພາສາລາວເດີມເປັນຫລັກ, ສຳລັບຄຳສັບທີ່ເປັນພາສາບາລີ, ສັນສະກຣິດ ແລະ ຄຳສັບຈາກພາສາອື່ນໆ ຫາກບໍ່ຈຳເປັນແທ້ໆ ກໍບໍ່ໄດ້ໃຊ້. ເຊັ່ນ ຄຳວ່າ ບິດາ, ມານດາ, ບຸດຕາ, ບຸດຕີ, ກຸມານ, ກຸມາຣີ ເປັນຕົ້ນ. ຜູ້ຂຽນໄດ້ໃຊ້ຄຳວ່າ ພໍ່, ແມ່, ລູກຊາຍ, ລູກຍິງແທນ ເຊິ່ງກໍມີຄວາມໝາຍດຽວກັນ ແລະ ຄົນລາວທົ່ວໄປສາມາດອ່ານ ເຂົ້າໃຈໄດ້ດີກວ່າ. ໃນເຫລັ້ມ II ນີ້ ຜູ້ຂຽນໄດ້ໃຊ້ຄຳວ່າມະຫາ ໄວ້ທາງໜ້າຊື່ຂອງຜູ້ຂຽນ ຕາມນາມະຍົດທີ່ໄດ້ມາ ຈາກການສຶກສາທາງພຸດທະສາດສະໜາ ທີ່ເສັງໄດ້ຊັ້ນມະຫາປະຣຽນ ແລະເພື່ອໃຫ້ກຽດແກ່ສະຖາບັນພຸດທະສາດສະໜາ ທີ່ໄດ້ສິດສອນວິຊາຄວາມຮູ້ໃຫ້ແກ່ຜູ້ຂຽນ ໄດ້ເອົາມານຳໃຊ້.

ສຸດທ້າຍນີ້ ຂໍຂອບໃຈທ່ານຜູ້ອ່ານທຸກທ່ານທີ່ໃຫ້ຄວາມສົນໃຈອ່ານ ແລະ ໃຫ້ການສະໜັບສະໜູນ. ຫາກມີຂໍ້ຂາດຕົກບົກພ່ອງປະການໃດຂໍອະໄພໄວ້ນະໂອກາດນີ້ດ້ວຍ. ຫາກທ່ານຜູ້ອ່ານມີຄວາມຄິດເຫັນໃດໜຶ່ງທີ່ຢາກຕຳໜິສິ່ງຂ່າວ ເພື່ອປັບປຸງປຶ້ມນີ້ ໃຫ້ດີຂຶ້ນໃນໂອກາດຕໍ່ໄປ. ຜູ້ຂຽນຂໍນ້ອມຮັບດ້ວຍຄວາມຍິນດີ ແລະ ຮູ້ບຸນຄຸນ.

ວັນທີ 25 ກໍລະກົດ 2009,

ມະຫາບຸນມີ ເທບສີເມືອງ.

# ສາລະບານ


| ຫົວເລື້ອງ | ໜ້າ |
|---|---|
| ອາລຳພະບົດ | (3) |
| ຄຳຊີ້ແຈງກ່ຽວກັບການຈັດພິມເຫລັ້ມ II, ເຫລັ້ມ III | (7) |
| ລາຍຊື່ກະສັດລາວທີ່ປົກຄອງປະເທດ ແຕ່ລະໄລຍະເວລາ | 1 |

## ພາກທີ I
## ສະພາບການໃນດິນແດນອານາຈັກອ້ອມຂ້າງ

| | | |
|---|---|---|
| 1. | ສະພາບການຢູ່ໃນອານາຈັກຂອມ | 11 |
| 2 | ສະພາບການຢູ່ໃນອານາຈັກລາວລ້ານນາ | 17 |
| 3 | ສະພາບການຢູ່ໃນອານາຈັກສຸໂຂໄທ | 23 |
| 4 | ສະພາບການຢູ່ໃນອານາຈັກອະຍຸດທະຍາ | 34 |
| 5 | ສະພາບການຢູ່ໃນອານາຈັກຈີນ | 36 |
| 6 | ສະພາບການຢູ່ໃນອານາຈັກຫວຽດນາມ | 49 |
| 7 | ສະພາບການຢູ່ໃນອານາຈັກພະມ້າ | 44 |

## ພາກທີ II
## ສະພາບການໃນອານາຈັກລາວລ້ານຊ້າງ ຕອນຕົ້ນ

| | |
|---|---|
| I ສະພາບການ ໄລຍະສ້າງຕັ້ງອານຈັກລາວລ້ານຊ້າງ | 59 |
| II ພຣະເຈົ້າຟ້າງຸ່ມສ້າງຕັ້ງອານາຈັກລາວລ້ານຊ້າງ | 62 |
| III ເຫດການສຳຄັນທີ່ເກີດຂຶ້ນ ຕໍ່ຈາກພຣະເຈົ້າຟ້າງຸ່ມ | 72 |
| 1. ຣາຊະການພຣະເຈົ້າອຸ່ນເມືອງ (ສາມແສນໄທ) | 72 |

2. ຣາຊະການພຣະເຈົ້າລ້ານຄຳແດງ 76
3. ບ້ານເມືອງເກີດຄວາມວຸ້ນວາຍ 10 ປີ 77
4. ຣາຊະການພຣະເຈົ້າໄຊຍະຈັກກະພັດ 85
5. ຣາຊະການພຣະເຈົ້າແທ່ນຄຳ 95
6. ຣາຊະການພຣະເຈົ້າຫລ້າແສນໄທ 97
7. ຣາຊະການເຈົ້າຊົມພູ 98
8. ຣາຊະການພຣະເຈົ້າວິຊຸລະຣາດ 98
9. ຣາຊະການພຣະເຈົ້າໂພທິສາລະຣາດ 102
- ສະພາບການໃນປະເທດອ້ອມຂ້າງ 111
10. ຣາຊະການພຣະເຈົ້າໄຊຍະເຊດຖາທິຣາດ 114
- ເກີດສົງຄາມກັບພະມ້າ 118
- ສ້າງເມືອງວຽງຈັນເປັນເມືອງຫລວງຂອງປະເທດ 123
- ສ້າງພຣະທາດສີສອງຮັກ 128
- ພະມ້າບຸກໂຈມຕີເມືອງວຽງຈັນ 137
- ຍົກທັບໄປຕີເມືອງພິດສະນຸໂລກ 143
- ການສ້າງບ້ານແປງເມືອງ 147
- ພຣະເຈົ້າໄຊຍະເຊດຖາທິຣາດຫາຍສາບສູນ 151
11. ຣາຊະການພຣະສຸມັງຄະລະໄອຍະໂກໂພທິສັດ 159
- ຕົກເປັນຫົວເມືອງຂຶ້ນຂອງພະມ້າ 161
12. ຣາຊະການພຣະອຸປະຣາດວໍຣະວັງໂສ 164
- ພຣະເຈົ້າໄຊຍະເຊດຖາທິຣາດປາກົດຕົວ 167
- ປະຊາຊົນລາວເຊດໃຕ້ຂັບໄລ່ການປົກຄອງຫຸ່ນ 167
13. ຣາຊະການພຣະສຸມັງຄະລະໄອຍະໂກ ເທື່ອທີສອງ 171

14. ຣາຊະການພະຍານະຄອນນ້ອຍ 171
15 . ຣາຊະການພຣະໜໍ່ແກ້ວກຸມມານ 173
16. ຣາຊະການພຣະວໍຣະວົງສາທຳມິກະຣາດ 175
- ປະກາດເອກະຣາດຈາກພະມ້າ 177
17. ຣາຊະການພຣະອຸປະຍຸວະຣາດ 185
18. ຣາຊະການພຣະບັນດິດໂພທິສາລະຣາດ 186
19. ຣາຊະການພຣະໝ່ອມແກ້ວ 187
20. ຣາຊະການພຣະເຈົ້າສຸຣິຍະວົງສາທຳມິກະຣາດ 188
- ທູດການຄ້າປະເທດໂຮລັງມາຢ້ຽມຢາມ 190
- ບັນທຶກຂອງຄຸນພໍ່ມາຣີນີກ່ຽວກັບເມືອງລາວ 197
21. ຣາຊະການເຈົ້າອິງຫລໍ່ 205
22. ຣາຊະການເຈົ້ານັນທະຣາດ 206
23. ຣາຊະການພຣະເຈົ້າໄຊຍະເຊດຖາທິຣາດທີ 2 206

## ພາກທີ III
## ວິວັດທນາການດ້ານອະຣິຍະທຳຂອງຊົນຊາດລາວ ໃນແຕ່ລະຍຸກສະໄໝ ຂອງປະຫວັດສາດ

**I. ສະໄໝສັງຄົມຊົນເຜົ່າ** 210
**1. ດ້ານຈິນຕະນາການ, ລັດທິຄວາມເຊື່ອຖືດັ້ງເດີມ** 210
1.1 ວັດທະນະທຳຫີນດາວ 214
1.2 ວັດທະນະທຳເສົາຫີນຕັ້ງ 221
1.3 ວັດທະນະທຳໄຫຫີນ 227
1.4 ວັດທະນະທຳໄຫດິນເຜົາ 231
1.5 ປະເພນີການຈູດບັ້ງໄຟບູຊາແຖນ 238

**2. ວິວັດທະນາການດ້ານເສດຖະກິດ ແລະສັງຄົມ** 240

2.1 ດ້ານເສດຖະກິດ 240

2.2 ດ້ານສັງຄົມ 242

2.3 ດ້ານການປູກຝັງ 248

2.4 ວິວັດທະນາການດ້ານການຫລອມໂລຫະ 250

2.5 ວັດທະນະທຳຄ້ອງບັ້ງທອງສຳລິດ 250

2.6 ການຜະລິດເກືອທາ ຫລື ເກືອໂຄກ 255

2.7 ການຜະລິດແຜ່ນແພ 256

**3. ວິວັດທະນາການດ້ານພາສາລາວ ແລະອັກສອນລາວ** 257

3.1 ວິວັດທະນາການດ້ານພາສາລາວ 257

3.2 ວິວັດທະນາການດ້ານອັກສອນລາວ 265

3.3 ການນັບຂອງຄົນລາວ 268

3.4 ວິວັດທະນາການກ່ຽວກັບລາຍແຕ້ມ 271

**4. ການປະດິດສ້າງແຄນເປັນດົນຕີປະຈຳເຜົ່າລາວ** 273

**II.ສະໄໝນະຄອນຣັດ ແລະ ອານາຈັກ** 276

1. ການສ້າງຕັ້ງນະຄອນຣັດ 277

2. ການສ້າງຕັ້ງອານາຈັກລາວໂຄດຕະບູນ 278

3. ການສ້າງຕັ້ງອານາຈັກລາວລ້ານຊ້າງ 281

3.1 ວິວັດທະນາການດ້ານພາສາລາວ ແລະອັກສອນລາວ 283

3.2 ບາງຫລັກຖານກ່ຽວກັບອັກສອນລາວ 286

4. ວິວັດທະນາການດ້ານສິລະປະສະຖາປັດຕະຍະກຳລາວ 292

## ພາກທີ IV
## ຮູບພາບສີປະກອບເນື້ອໃນ

1. ຮູບພາບກ່ຽວກັບການຂຸດຄົ້ນຫລຸມຝັງສົບຄົນບູຮານ 298
2. ຮູບພາບກ່ຽວກັບວັດທະນະທຳຫີນດາວ 301
3. ຮູບພາບກ່ຽວກັບລາຍແຕ້ມຕາມໜ້າຜາ 320
4. ຮູບພາບກ່ຽວກັບວັດທະນະທຳເສົາຫີນຕັ້ງ 306
5. ຮູບພາບກ່ຽວກັບວັດທະນະທຳໄຫຫີນ 309
6. ຮູບພາບກ່ຽວກັບວັດທະນະທຳໄຫດິນເຜົາ 312
7. ຮູບພາບກ່ຽວກັບວັດທະນະທຳຄ້ອງບັ້ງທອງສຳລິດ 314
8. ຮູບພາບກ່ຽວກັບປະເພນີການຈູດບັ້ງໄຟບູຊາແຖນ 317
9. ຮູບພາບກ່ຽວກັບການຟື້ນຟູເມືອງວຽງຈັນ 319
10. ຮູບພາບກ່ຽວກັບຫລັກຖານດ້ານອັກສອນລາວ 321
11. ຮູບພາບກ່ຽວກັບສິລະປະ ສະຖາປັດຕະຍະກຳລາວ 326
12. ຮູບພາບກ່ຽວກັບສິລະປະຫັດຖະກຳແຜ່ນແພລາວ 334

## ພາກທີ V
### ເອກະສານຕໍ່ທ້າຍ

1. ລວມລາຍຊື່ກະສັດສະຫຍາມແຕ່ສະໄໝອະຍຸດທະຍາ ເຖິງ ສະໄໝຣັດຕະນະໂກສິນ 336
2. ແຫລ່ງຂໍ້ມູນ, ເອກະສານອ້າງອີງ 362

### ກ່ອນເຂົ້າສູ່ເນື້ອໃນຂອງປຶ້ມເຫລັ້ມ II,

ໄດ້ຄັດຈ້ອນລາຍຊື່ກະສັດລາວ ຕະຫລອດໄລຍະເວລາ ຂອງອານາຈັກລາວລ້ານຊ້າງ ມາພິມໄວ້ ເພື່ອໃຫ້ເຫັນພາບລວມ ຂອງການປົກຄອງໃນ ແຕ່ລະໄລຍະ ດັ່ງລາຍລະອຽດຕໍ່ໄປນີ້.

# ລາຍຊື່ກະສັດລາວ ທີ່ປົກຄອງປະເທດ ແຕ່ລະໄລຍະ ຈາກ ຄ.ສ. 1271 ເຖິງ ຄ.ສ. 1975.

| ລຳດັບ | ລາຍຊື່ ກະສັດ ຫລືບຸກຄົນສຳຄັນ ທີ່ປົກຄອງປະເທດ | ປີທີ່ປົກຄອງປະເທດ | | | |
|---|---|---|---|---|---|
| | | ລວມປີ ປົກຄອງ | ພ.ສ. | ຄ.ສ. | ຈ.ສ. |
| ສະໄໝນະຄອນ ຫລວງພຣະບາງ | | | | | |
| 01 | ພະຍາພະຍາລັງທິລາດ | 45 ປີ | 1814-1859 | 1271-1316 | 633-678 |
| 02 | ພະຍາສຸວັນນະຄຳຜົງ | 28 ປີ | 1859-1887 | 1316-1344 | 678-706 |
| 03 | ເຈົ້າຟ້າງ້ຽວ ຫລືຂຸນຜີຟ້າ | 4 ປີ | 1887-1891 | 1344-1348 | 706-713 |
| 04 | ເຈົ້າຟ້າຄຳຮຽວ | 5 ປີ | 1891-1896 | 1348-1353 | 710-715 |
| 05 | ພະຍາຟ້າງຸ່ມ | 18 ປີ | 1896-1914 | 1353-1371 | 715-733 |
| 06 | ພະຍາສາມແສນໄທ ໄຕພູວະນາດ | 46 ປີ | 1914-1960 | 1371-1417 | 733-779 |
| 07 | ພະຍາລ້ານຄຳແດງ | 11 ປີ | 1960-1971 | 1417-1428 | 779-790 |

24/7 ຫ້າມຈຳໜ່າຍ

| | | | | | |
|---|---|---|---|---|---|
| | ເກີດຄວາມປັ່ນປ່ວນ ຍ້ອນພຣະມະຫາຣາຊະເທວີ ແກ້ວພິມພາ ຄຸມອຳນາດ ການປົກຄອງຢູ່ 10 ປີ | | 1971-1981 | 1428-1438 | 790-800 |
| 08 | ພະຍາພິມມະທັດ | 1 ປີ | 1971-1972 | 1428-1429 | 790-791 |
| 09 | ພະຍາປາກຫ້ວຍຫລວງ | 1 ປີ | 1972-1973 | 1429-1430 | 791-792 |
| 10 | ພະຍາໃສ | ບໍ່ເຖິງປີ | 1973 | 1430 | 792 |
| 11 | ພະຍາໄຄ | ບໍ່ເຖິງປີ | 1973 | 1430 | 792 |
| 12 | ພະຍາຊຽງສາ | 3 ປີ | 1973-1976 | 1430-1433 | 792-895 |
| 13 | ພະຍາຍຸຄົນ | 1 ປີ | 1976-1977 | 1433-1434 | 795-796 |
| 14 | ພະຍາຄຳເກີດ | 3 ປີ | 1978-1981 | 1435-1438 | 797-800 |
| 15 | ພຣະເຈົ້າໄຊຈັກກະພັດ | 42 ປີ | 1981-2023 | 1438-1480 | 800-842 |
| 16 | ພຣະເຈົ້າສຸວັນນະບັນລັງ | 7 ປີ | 2023-2030 | 1480-1487 | 842-849 |
| 17 | ພຣະເຈົ້າຫລ້ານ້ຳແສນໄທ | 9 ປີ | 2030-2039 | 1487-1496 | 849-858 |

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນໍາ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ